# ທາງລົດໄຟ ລາວ-ຈີນ ເປີດນຳໃຊ້ຄົບຮອບ 3 ປີ, ການຮ່ວມມື ລະຫວ່າງ ສປປ ລາວ ແລະ ແຂວງຫູໜານ ໄດ້ຂະຫຍາຍເຂົ້າສູ່ລວງເລິດ ຍິ່ງຂຶ້ນ

ວັນທີ 3 ທັນວານີ້, ທາງລົດໄຟ ລາວ-ຈີນ ໄດ້ເປີດນຳໃຊ້ຄົບຮອບ 3 ປີ. 11 ເດືອນຕົ້ນປີນີ້, ທ່າກຳປັ່ນສາກົນຮວຍຮວ້າ ໄດ້ມີຂະບວນລົດໄຟຂົນສົ່ງສິນຄ້າຕາມທາງລົດໄຟ ລາວ-ຈີນ 296 ຖ້ຽວ ເຊິ່ງເປັນອັນດັບໜຶ່ງໃນບັນດາແຂວງທາງພາກກາງຂອງຈີນ.

ທ່ານ ຄຳແພງ ຊາວບໍ່ເຕ່ນ ຜູ້ອຳນວຍການບໍລິສັດຈໍລະຈອນສິນຄ້າລາວ-ໄທ ສາຂາບໍ່ເຕ່ນ ທີ່ສ້າງຕັ້ງຂຶ້ນໂດຍຊາວຫູໜານກ່າວວ່າ: "ພວກເຮົາມັກເວົ້າວ່າ: ຊາວຫູໜານຢູ່ໃສ, ໂອກາດການຄ້າກໍຢູ່ນັ້ນ." ທ່ານກ່າວຕື່ມວ່າ: ຕົນເອງມີລາຍຮັບທີ່ໝັ້ນຄົງ ແລະ ຮູ້ສຶກເພິ່ງພໍໃຈຕໍ່ໜ້າທີ່ວຽກງານຂອງຕົນໃນປັດຈຸບັນ.

ຕະຫຼອດ 3 ປີທີ່ເປີດນຳໃຊ້ທາງລົດໄຟ ລາວ-ຈີນເປັນຕົ້ນມາ, ຊາວຫູໜານໄດ້ເພີ່ມທະວີການແລກປ່ຽນໄປມາຫາສູ່ກັບປະຊາຊົນລາວນັບມື້ນັບຫຼາຍຂຶ້ນ ເຊິ່ງໄດ້ຊຸກຍູ້ໃຫ້ການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ຈີນ-ອາຊຽນ ໄດ້ຂະຫຍາຍຕົວເຂົ້າສູ່ລວງເລິກ. ເດືອນກັນຍາຜ່ານມາ, ໜັງສືພິມລາຍວັນຫູໜານ ໄດ້ຈັດກິດຈະກຳໂຄສະນາເຜີຍແຜ່ສາກົນຂະໜາດໃຫຍ່ທີ່ພາດຫົວຂໍ້ "Fortune Favors the Brave ——Hunan Entrepreneurs inASEAN" ໂດຍໄດ້ແນະນຳນັກທຸລະກິດຫູໜານເຮັດແນວໃດ ເພື່ອຊົມໃຊ້ໂອກາດພັດທະນາທີ່ດີ ຂອງທາງລົດໄຟ ລາວ-ຈີນ ກັບ ປະຊາຊົນລາວ.



ທ່ານ ຄຳແພງ ກວດກາຕູ້ຄອນເທນເນີ ຢູ່ສະຖານີບໍ່ເຕ່ນຂອງທາງລົດໄຟ ລາວ-ຈີນ. ພາບໂດຍ: Guo Liliang




ຢູ່ສະຖານີລົດໄຟວຽງຈັນໃຕ້ ທາງລົດໄຟ ລາວ-ຈີນ, ທ່ານ ຫຼີ ທອງສີ (ເບື້ອງຊາຍ) ກຳລັງກວດກາຕູ້ຄອນເທນເນີ. ພາບໂດຍ: Guo Liliang

ວັນທີ 27 ພະຈິກນີ້, ຢູ່ສວນສາທາລະນະວິລະຊົນແຂວງຫູໜານ, ລະດູການຕ່າງໆຄືດັ່ງຮູບສີ, ເຮັດໃຫ້ນະຄອນສາງຊາໃນປະຈຸບັນ ມີສີສັນ ແລະ ສວຍງາມ. ພາບໂດຍ: Gu Pengbo, ນັກຂ່າວສື່ຮອບດ້ານ ໜັງສືພິມລາຍວັນຫູໜານ

## ແຂວງຫູໜານໃນລະດູໃບໄມ້ຫຼົ່ນ ແລະ ລະດູໜາວ ງາມປານໃດ?

ແຂວງຫູໜານ ໃນລະດູໃບໄມ້ຫຼົ່ນ ແລະ ລະດູໜາວງາມປານຮູບແຕ້ມ. ຕົ້ນຢີນຊິ້ງ (Ginkgo) ສີເຫຼືອງ, ຕົ້ນອູຖົງ (Parasol Tree) ທີ່ມີຫຼາກຫຼາຍສີ ແລະ ຕົ້ນເຟີງ (Maple) ສີແດງ ແລະ ຕົ້ນສຸຍຊານ (Dawn Redwood) ທີ່ລຶກລັບ ໄດ້ເພີ່ມສີສັນໃຫ້ແກ່ລະດູໃບໄມ້ຫຼົ່ນ ແລະ ລະດູໜາວຂອງແຂວງຫູໜານ.

ຢູ່ສວນສາທາລະນະວິລະຊົນແຂວງຫູໜານ, ຕົ້ນສຸຍຊານໄດ້ປະກົດມີໂສມໜ້າໃໝ່ ເຊິ່ງໄດ້ເຂົ້າສູ່ໄລຍະທີ່ງາມທີ່ສຸດ. ເບິ່ງໄປແລ້ວ, ຕົ້ນສຸຍຊານທີ່ຢູ່ຕາມແຄມທາງ ເທິງໜ້ານ້ຳ ໄດ້ປະກົດມີສີແດງກ່ຳທີ່ເຕັມໄປດ້ວຍຄວາມມີສະເໜ່ ແລະ ມີບັນຍາກາດໂລແມນຕິກທີ່ສຸດ.

ຕົ້ນສຸຍຊານຂອງແຂວງຫູໜານມີໂສມໜ້າໃໝ່ແລ້ວ, ເຮັດໃຫ້ບັນຍາກາດໃນລະດູໜາວມີຫຼາກຫຼາຍສີສັນ. ຢູ່ຕໍ່ໜ້າຫໍໄອ້ວານ ຂອງພູຢື້ວລູ້, ປ່າຕົ້ນເຟີງປ່ຽນເປັນສີແດງ, ສະທ້ອນໃຫ້ຫໍໄອ້ວານກໍງາມອີ່ຫຼີ.

ໃບອູຖົງເລີ່ມປ່ຽນເປັນສີຄຳ, ປານແມງກະເບື້ອບິນໄປ-ມາ ເຊິ່ງໄດ້ປູຜ້າພົມສີຄຳໃຫ້ແກ່ແຜ່ນດິນ, ຕົ້ນຢີນຊິ້ງເຕັມສວນກໍໄດ້ປ່ຽນເປັນສີເຫຼືອງແລ້ວ ເຊິ່ງເຮັດໃຫ້ຜູ້ຊົມເຂົ້າມາຊົມຢ່າງບໍ່ຂາດສາຍ.



ວັນທີ 31 ຕຸລາຜ່ານມານີ້, ຢູ່ແຫຼ່ງທ່ອງທ່ຽວພູທຽນຈື ສວນອຸທິຍານແຫ່ງຊາດຈ່າງຈາແຈ້, ນັກທ່ອງທ່ຽວພາກັນຊົມວິວທິວທັດອັນສວຍສົດງົດງາມ ໃນບັນຍາກາດແຫ່ງການປະສົມປະສານ ລະຫວ່າງ ແສງແດດທີ່ອົບອຸ່ນ ກັບ ຕົ້ນເຟີງ, ຕົ້ນຢີນຊິ້ງ, ຕົ້ນສຸຍຊານ ແລະ ຕົ້ນໄມ້ອື່ນໆ ຊ່າງເປັນພາບທີ່ອ່ອນຊ້ອນ, ປານໄດ້ເຂົ້າໄປຢູ່ໃນໂລກແຫ່ງເທບນິຍາຍ. ພາບໂດຍ: Deng Daoli



ວັນທີ 12 ພະຈິກຜ່ານມານີ້, ໃນຕົ້ນລະດູໜາວ, ພືດຜັກ ແລະ ໃບໄມ້ຕ່າງໆ ຢູ່ອ້ອມແອ້ມຈຸດຊົມວິວທິວທັດ ຫໍໄອ້ວານ ຂອງພູຢື້ວລູ້ ນະຄອນສາງຊາ ໄດ້ຄ່ອຍໆປ່ຽນເປັນສີແດງ ແລະ ສີເຫຼືອງ, ໄດ້ເພີ່ມສີສັນອັນສົດໃສໃຫ້ພູຢື້ວລູ້ ໃນລະດູໜາວ. ພາບໂດຍ: Li Jian, ນັກຂ່າວສື່ຮອບດ້ານ ໜັງສືພິມລາຍວັນຫູໜານ